ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງທຶນປົກປັກຮັກສາສິ່ງແວດລ້ອມ

ບົດລາຍງານ ຄວາມຄືບໜ້າ ການຈັດຕັ້ງປະຕິບັດໂຄງການຍ່ອຍ ທີ່ໄດ້ຮັບທຶນພາຍໃນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ປະຈຳປີ 2022 ແລະ ແຜນປະຈຳປີ 2023

ນະຄອນຫຼວງວຽງຈັນ, ກຸມພາ 2023

ຄຳນຳ

ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ສຸມໃສ່ ຈັດຕັ້ງປະຕິບັດແຜນການ ປີ 2022 ແນໃສ່ເຮັດໃຫ້ບັນດາຄາດໝາຍສູ້ຊົນ ແລະ ໜ້າວຽກຈຸດສຸມທີ່ກຳນົດໄວ້ ໄດ້ຮັບຜົນສຳເລັດຕາມເປົ້າໝາຍ ປະກອບສ່ວນໃຫ້ແກ່ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄປຕາມທິດສີຂຽວ ແລະ ຍືນຍົງ. ບົດສະຫລຸບນີ້ ໄດ້ສັງລວມຜົນການຈັດຕັ້ງປະຕິບັດແຜນການສະໜອງທຶນ ປະຈຳປີ 2022 ພ້ອມທັງຕີລາຄາ ການຈັດຕັ້ງປະຕິບັດໂຄງການ ແລະ ບົດຮຽນທີ່ຖອດຖອນໄດ້ໃນໜຶ່ງປີຜ່ານມາ ແລະ ກຳນົດແຜນການສະໜອງທຶນ ປະຈຳ ປີ 2023 ໃຫ້ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ໃນການສະໜອງທຶນ ໃຫ້ແກ່ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

ໄດ້ມີບົດແນະນຳ ວ່າດ້ວຍນະໂຍບາຍສະໜອງທຶນພາຍໃນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ໂດຍຈັດແບ່ງການໃຫ້ທຶນເປັນ 2 ຂະໜາດ ຄື ໂຄງການຂະໜາດນ້ອຍ ແລະ ຂະໜາດກາງ ພ້ອມທັງກຳນົດເງື່ອນໄຂ ແລະ ຂົງເຂດບູລິມະສິດທີ່ຈະໄດ້ຮັບທຶນ ຊຶ່ງບົດແນະນຳດັ່ງກ່າວໄດ້ຖືກຮັບຮອງ ຈາກປະທານສະພາບໍລິຫານ ກປສ ໃນວັນທີ 06 ກໍລະກົດ 2022 ສະບັບເລກທີ 13/ກປສ.ສພ.

ໃນປີ 2022 ທຶນພາຍໃນ: ມີລາຍຈ່າຍທັງໝົດ 0.89 ລ້ານໂດລາສະຫະລັດ ເທົ່າກັບ 11.92 ຕື້ກີບ (ປະຕິບັດໄດ້ 97% ທຽບໃສ່ແຜນດັດແກ້ 6 ເດືອນທ້າຍປີ 2022 ຈຳນວນ 12.27 ຕື້ກີບ). ໃນນີ້ ສະໜອງທຶນໃຫ້ໂຄງການ ຈຳນວນ 38 ໂຄງການ ເປັນເງິນຈຳນວນ 0.73 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 9.82 ຕື້ກີບ ແລະ ລາຍຈ່າຍຄຸ້ມຄອງບໍລິຫານໂຄງການ ແລະ ສ້າງຄວາມເຂັ້ມແຂງໃຫ້ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ຈຳນວນ 0.16 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 2.10 ຕື້ກີບ.

ບົດສະຫລຸບນີ້ ໄດ້ສັງລວມຜົນການຈັດຕັ້ງປະຕິບັດແຜນການ ປີ 2022 ພ້ອມທັງຕີລາຄາ ດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ໃນໜຶ່ງປີ ຜ່ານມາ ແລະ ກຳນົດທິດທາງແຜນການ ປີ 2023 ໃຫ້ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ໃຫ້ປະກົດຜົນເປັນຈິງ ຕາມພາລະບົດບາດ ໃນການລະດົມທຶນ, ການສະສົມທຶນ ແລະ ການສະໜອງທຶນ ໃຫ້ແກ່ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

ນະຄອນຫຼວງວຽງຈັນ, ວັນທີ..20...ກຸມພາ.2023

ກອງທຶນປົກປັກຮັກສາສິ່ງແວດລ້ອມ

ປອ. ບຸນພາມາ ໂພທິສານ

ສາລະບານ

I. ສະພາບລວມ

II. ສະຫຼຸບການຈັດຕັ້ງປະຕິບັດໂຄງການ ປະຈຳປີ 2022

1. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຕ່າງໆ ຕາມແຕ່ລະຮ່ອງທຶນ

1.1. ຮ່ອງທຶນ ນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ

1.2. ຮ່ອງທຶນດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ

1.3. ຮ່ອງທຶນດ້ານສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດ

1.4. ຮ່ອງທຶນຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ

1.5. ຮ່ອງທຶນການຄຸ້ມຄອງທີ່ດິນແບບຍືນຍົງ

1.6. ຮ່ອງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ

2. ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການເງິນກູ້

III. ການຕິດຕາມ ແລະ ປະເມີນຜົນໂຄງການຍ່ອຍ

3.1. ຕິລາຄາການຈັດຕັ້ງປະຕິບັດ

3.2. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້

IV. ແຜນການຈັດຕັ້ງປະຕິບັດ ປະຈຳປີ 2023

I. ສະພາບລວມ

ໃນປີ 2022 ທຶນພາຍໃນ ກໍ່ໄດ້ມີຜົນສຳເລັດຫຼາຍດ້ານຄື: ສຳເລັດການຈັດຝຶກອົບຮົມ ກ່ຽວກັບການຄຸ້ມຄອງໂຄງການໃຫ້ແກ່ 10 ໂຄງການ ທີ່ໄດ້ເຊັນສັນຍາໃນທ້າຍປີ 2021 ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 65 ທ່ານ, ຍິງ 34 ທ່ານ. ສຳເລັດການຈັດກອງປະຊຸມ ແລກປ່ຽນບົດຮຽນໂຄງການທີ່ໄດ້ຮັບທຶນພາຍໃນ ຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ຊຶ່ງໄດ້ມີການທົບທວນການຈັດຕັ້ງປະຕິບັດ ໂຄງການທີ່ໄດ້ຮັບທຶນຈາກ ກປສ, ໄດ້ຮັບຟັງບັນຫາ, ສິ່ງທ້າທ້າຍ ທີ່ເກີດຂຶ້ນໃນການຈັດຕັ້ງປະຕິບັດ ແລະ ວິທີແກ້ໄຂ ຂອງແຕ່ລະໂຄງການ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດໂຄງການຮ່ວມກັນ ລະຫວ່າງວັນທີ 6-7 ເມສາ 2022 ທີ່ເມືອງວັງວຽງ ແຂວງວຽງຈັນ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 37 ຄົນ, ຍິງ 8 ຄົນ ຈາກ 10 ໂຄງການຍ່ອຍ;

ໃນປີ 2022 ສາມາດສະໜອງທຶນພາຍໃນ ໃຫ້ໂຄງການ ຈຳນວນ 38 ໂຄງການ, ປະຕິບັດໄດ້ 98% ທຽບໃສ່ແຜນດັດແກ້ 6 ເດືອນທ້າຍປີ 2022 ຊຶ່ງໄດ້ສະໜອງທຶນໄປຕາມ 6 ຮ່ວງທຶນ ຄື: 1. ຮ່ວງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ (97%), 2. ຮ່ວງທຶນດ້ານອະນຸລັກຊີວະນາໆພັນ ແລະ ພັດທະນາຊຸມຊົນ (99%), 3. ຮ່ວງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດ (99%), 4. ຮ່ວງທຶນດ້ານການຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ (90%), 5. ຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ (97%) ແລະ 6. ຮ່ວງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ (99%).

ໄດ້ຮັບບົດສະເໜີໂຄງການ ທັງໝົດ **40** ໂຄງການ ໃນນັ້ນ ໄຕມາດ **I** ມີ **14** ໂຄງການ ຈາກ **9** ພາກສ່ວນ (ສະມາຄົມລາວພັດທະນາຊັບພະຍາກອນມະນຸດໃນຊົນນະບົດ, ພະແນກອຸດສະຫະກຳ ແລະ ການຄ້າ ແຂວງ ຄຳມ່ວນ, ພຊສ ແຂວງ ສະຫວັນນະເຂດ, ບໍລິຄຳໄຊ, ຈຳປາສັກ, ຫຼວງນ້ຳທາ, ຫຼວງພະບາງ, ຫ້ອງການ ຊສ ເມືອງເຊບັ້ງໄຟ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ສາລະວັນ) ຊຶ່ງໄດ້ເອົາເຂົ້າກອງປະຊຸມຄະນະວິຊາການ (TC) ຈຳນວນ **3** ໂຄງການ ອະນຸມັດແລ້ວ **2** ໂຄງການ. ໃນໄຕມາດ **II** ມີ **15** ໂຄງການ ຈາກ **13** ພາກສ່ວນ (ຫ້ອງການ ກຊສ, ກົມແຜນການ ແລະ ການເງິນ, ກຊສ, ກົມທີ່ດິນ, ສະມາຄົມລາວພັດທະນາຊັບພະຍາກອນມະນຸດໃນຊົນນະບົດ, ພຊສ ແຂວງ ສະຫວັນນະເຂດ, ຫຼວງພະບາງ, ບໍລິຄຳໄຊ, ແຂວງຫຼວງນ້ຳທາ, ຫ້ອງການ ຊສ ເມືອງຫົງສາ ແລະ ເມືອງປາກລາຍ ແຂວງໄຊຍະບູລີ, ພະແນກກະສິກຳ ແລະ ປ່າໄມ້ ຮ່ວມກັບ ພຊສ ແຂວງ ອັດຕະປື, ພະແນກກະສິກຳ ແລະ ປ່າໄມ້ ແຂວງວຽງຈັນ) ແລະ ໃນໄຕມາດ **III** ມີ **12** ໂຄງການ ຈາກ **8** ພາກສ່ວນ (ພຊສ ແຂວງຫຼວງນ້ຳທາ, ພຊສ ແຂວງຄຳມ່ວນ, ແຂວງສະຫວັນນະເຂດ, ແຂວງຜົ້ງສາລີ, ແຂວງໄຊຍະບູລີ, ແຂວງ ຫຼວງພະບາງ, ແຂວງໄຊສົມບູນ ແລະ ສະພາແຫ່ງຊາດ) ຊຶ່ງໄດ້ເອົາເຂົ້າກອງປະຊຸມຄະນະວິຊາການ (TC) ຈຳນວນ **12** ໂຄງການ ແລະ ໄຕມາດ **IV** ມີ **3** ໂຄງການ ຈາກ ແຂວງຫຼວງພະບາງ, ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກົມປູກຝັງ. ສ່ວນໂຄງການທີ່ບໍ່ໄດ້ເອົາເຂົ້າກອງປະຊຸມ (TC) ແມ່ນເນື່ອງຈາກວ່າ ການປະກອບເອກະສານບໍ່ທັນຄົບຖ້ວນ ແລະ ການສະເໜີຂໍ້ງົບປະມານສູງເກີນວົງເງິນທີ່ກຳນົດໄວ້ ຊຶ່ງກໍ່ໄດ້ມີການແຈ້ງຕອບໃຫ້ປັບປຸງຄືນ;

ສຳເລັດການເຊັນສັນຍາໂຄງການໃໝ່ ຈຳນວນ 2 ໂຄງການ ຄື: 1) ໂຄງການຄຸ້ມຄອງປົກປັກຮັກສາອະນຸລັກຊີວະນາໆພັນໃນປ່າປ້ອງກັນພູເສັດ ແລະ ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນແບບມີສ່ວນຮ່ວມ ຂອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງສາລະວັນ ງົບປະມານ 800,000,000 ກີບ 2) ໂຄງການຄຸ້ມຄອງການນຳໃຊ້ສານເຄມີ ໃນຂົງເຂດອຸດສະຫະກຳປຸງແຕ່ງ ທີ່ຕິດພັນກັບການຮັກສາສິ່ງ ແວດລ້ອມພາຍໃນ 10 ເມືອງ ແຂວງ ຄຳມ່ວນ ພະແນກອຸດສະຫະກຳ ແລະ ການຄ້າ ແຂວງຄຳມ່ວນ ງົບປະມານ 483,000,000 ກີບ, ໃນວັນທີ 24 ພຶດສະພາ 2022. ດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 1: ເຊັນສັນຍາສະໜອງທຶນ ໃຫ້ໂຄງການໃໝ່ ປະຈຳປີ 2022

ລ/ດ	ລາຍການ	ເປີເຊັນ ແຜນ ເບື້ອງຕົ້ນ	ແຜນຄາດຄະເນເບື້ອງຕົ້ນ ປີ 2022		ສະໜອງທຶນຕົວ ຈິງໃຫ້ໂຄງການໃ ໝ່ ປີ 2022	ຄິດໄລ່ເປັນ ເປີເຊັນ
			ກີບ	ໂດລາ	ກີບ	
1	ຮ່ວງທຶນ ດ້ານນະໂຍບາຍ	30%	3.361.200.000	300.000	0	
2	ຮ່ວງທຶນ ດ້ານຊີວະນາໆພັນ	15%	1.680.600.000	150.000	800.000.000	7.14%
3	ຮ່ວງທຶນ ດ້ານສິ່ງແວດລ້ອມ	20%	2.240.800.000	200.000	438.000.000	3.90%
4	ຮ່ວງທຶນ ດ້ານດິນ	15%	1.680.600.000	150.000	0	
5	ຮ່ວງທຶນ ດ້ານນ້ຳ	10%	1.120.400.000	100.000	0	
6	ຮ່ວງທຶນປ່ຽນແປງດິນຟ້າ ອາກາດ	10%	1.120.400.000	100.000	0	
	ລວມທັງໝົດ	**100%**	**11.204.000.000**	**1.000.000**	**1.238.000.000**	**10.04%**

II. ສະຫຼຸບການຈັດຕັ້ງປະຕິບັດໂຄງການທຶນພາຍໃນ ປະຈຳປີ 2022

1) ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຕ່າງໆ ຕາມແຕ່ລະຮ່ວງທຶນ

ໃນປີ 2022 ໄດ້ຈັດຕັ້ງປະຕິໂຄງການໄປຕາມ 6 ຮ່ວງທຶນ: 1) ຮ່ວງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ, 2) ຮ່ວງທຶນດ້ານອະນຸລັກຊີວະນາໆພັນ ແລະ ພັດທະນາຊຸມຊົນ, 3) ຮ່ວງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດ, 4) ຮ່ວງທຶນດ້ານການຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ, 5) ຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ ແລະ 6) ຮ່ວງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ. ໃຫ້ແກ່ໂຄງການ ຈຳນວນ 38 ໂຄງການ ລວມມູນຄ່າ 0.73 ລ້ານໂດລາສະຫະລັດ ຫຼື 9.82 ຕື້ກີບ ໂດຍອີງຕາມແຜນງົບປະ ມານປະຈຳປີ ຂອງໂຄງການ ແລະ ສອດຄ່ອງກັບແຜນງົບປະມານປະຈຳປີ ຂອງ ກປສ ທີ່ໄດ້ຮັບໂຕເລກອະນຸມັດຈາກກະຊວງການເງິນ ດັ່ງລາຍລະອຽດລຸ່ມນີ້:

1.1. ຮ່ວງທຶນ ນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ

ການສະໜອງທຶນຜ່ານຮ່ວງທຶນນະໂຍບາຍ ໄດ້ 9 ໂຄງການ ລວມມູນຄ່າ 2.61 ຕື້ກີບ ຊຶ່ງສຸມໃສ່ວຽກງານຄື: (ກ) ສະໜັບສະໜຸນໂຄງການຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ (ພຊສ/ຫຊສ) ໃນການປະຕິບັດພາລະບົດບາດການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ; (ຂ) ການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະການຕ່າງໆເຊັ່ນ: ສະພາບໍລິຫານ ແລະ ຄະນະວິຊາການ ກປສ; (ຄ) ການພັດທະນາ, ປັບປຸງເຜີຍແຜ່ຂໍ້ມູນຂ່າວສານ ແລະ ຕິດຕາມກິດຈະກຳທີ່ກ່ຽວຂ້ອງກັບ

ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; (ງ) ການສ້າງຖານຂໍ້ມູນ ແລະ ລະບົບການລົງ ທະບຽນ, ລະຫັດຂອງຂໍ້ມູນ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການຄົ້ນຄວ້າ, ເຄືອຂ່າຍເຜີຍແຜ່, ມາດຕະການແກ້ໄຂບັນຫາສຸກເສີນ ກ່ຽວກັບຊັບພະຍາກອນທຳ ມະຊາດ ແລະ ສິ່ງ ແວດລ້ອມ; (ຈ) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສກປສ;

1.2. ຮ່ອງທຶນດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ

ການສະໜອງທຶນຜ່ານຮ່ອງທຶນຊີວະນາໆພັນ ໄດ້ 13 ໂຄງການ ລວມມູນຄ່າ 3.55 ຕື້ກີບ ຊຶ່ງສຸມໃສ່ວຽກງານຄື: (ກ) ສ້າງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາ ກອນປ່າໄມ້ ຂອງຂະແໜງການທີ່ກ່ຽວຂ້ອງຂັ້ນສູງກາງ ແລະ ທ້ອງຖິ່ນ; (ຂ) ສຳຫຼວດ, ຈັດແບ່ງ, ໝາຍເຂດປ່າ ແລະ ປະເພດ ປ່າ ພ້ອມທັງມີການຕິດຕາມກວດກາການຄຸ້ມຄອງ ແລະ ນຳໃຊ້ປ່າແຕ່ລະປະ ເພດ; (ຄ) ສົ່ງເສີມການເກັບກຳຂໍ້ມູນ , ການຂຶ້ນບັນຊີ ແລະ ການຄາດຄະເນມູນຄ່າຊັບພະຍາກອນທຳມະຊາດ; (ງ) ສົ່ງເສີມການອະນຸລັກພັນພືດ, ພັນ ສັດທີ່ຫາຍາກ ແລະ ໃກ້ຈະສູນພັນລວມທັງການປົກປັກຮັກສາທີ່ຢູ່ອາໃສຂອງພືດ ແລະ ສັດດັ່ງກ່າວ; (ຈ) ສົ່ງເສີມ ການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າແບບຍືນຍົງຂອງຊຸມຊົນ ເພື່ອປົກປັກຮັກສາປ່າຍອດນ້ຳ ແລະ ເຮັດ ໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນໃຫ້ໄດ້ 70% ຂອງເນື້ອທີ່ດິນທົ່ວປະເທດ ແລະ ຊຸກຍູ້ການຂະຫຍາຍຕົວ ເສດຖະກິດ; (ສ) ສົ່ງເສີມການປູກປ່າ ແລະ ຟື້ນຟູປ່າໃສ່ດິນປອກໂຫຼ້ນ ແລະ ດິນເຊື່ອມໂຊມ ເພື່ອຂະຫຍາຍເນື້ອທີ່ ປົກຫຸ້ມຂອງປ່າ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ; (ຊ) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາ ລະນາອະນຸມັດຈາກສະພາບໍລິຫານ ກປສ;

1.3. ຮ່ອງທຶນດ້ານສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດ

ການສະໜອງທຶນຜ່ານຮ່ອງທຶນສິ່ງແວດລ້ອມ ໄດ້ 7 ໂຄງການ ລວມມູນຄ່າ 1.87 ຕື້ກີບ ຊຶ່ງໄດ້ສຸມໃສ່ວຽກງານຄື: (ກ) ຈັດຕັ້ງປະຕິບັດກົນໄກການສົ່ງເສີມ ການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີປະສິດທິຜົນ, ການນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ການຜະລິດທີ່ສະອາດ; (ຂ) ສືບຕໍ່ຍົກສູງຂະບວນການສຶກ ສາ ແລະ ສ້າງຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ແບບຍືນຍົງ; (ຄ) ຈັດຕັ້ງປະຕິບັດນິຕິກຳ, ມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ, ຄູ່ມືແນະນຳ ແລະ ກົນ ໄກສຳລັບການປ້ອງກັນ, ຄວບຄຸມ ແລະ ຕິດຕາມກວດ ການມົນລະພິດ (ດິນນ້ຳ, ອາກາດ ແລະ ສຽງ) ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນໃນຂອບເຂດທົ່ວປະເທດ; (ງ) ຄຸ້ມຄອງຕິດຕາມກວດກາດ້ານສິ່ງແວດລ້ອມເຊັ່ນ: ສິ່ງເສດເຫຼືອ, ສານເຄມີທີ່ເປັນພິດອັນຕະລາຍ, ມົນລະພິດທາງອາກາດ, ມົນລະພິດທາງສຽງ ແລະ ການປ່ອຍນ້ຳ ເສຍຈາກຊຸມຊົນ ແລະ ໂຮງງານອຸດສາຫະກຳຕ່າງໆ; (ຈ) ຜັນຂະຫຍາຍການຈັດຕັ້ງປະຕິບັດແນວຄວາມຄິດ 3Rs (ຫຼຸດຜ່ອນ, ນຳໃຊ້ຄືນ, ໝຸນໃຊ້ຄືນ) ໃນຄົວເຮືອນ ພ້ອມທັງປັບປຸງລະບົບການຄຸ້ມຄອງ ແລະ ກຳຈັດສິ່ງເສດເຫຼືອ ໃນເຂດຕົວເມືອງໃຫຍ່ ແລະ ເຂດຊົນນະບົດ; (ສ) ສົ່ງເສີມອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງຕາມທິດ ສີຂຽວ ແລະ ຍືນຍົງ ໂດຍສະເພາະກະສິກຳສະອາດ ແລະ ກະສິກຳປອດສານພິດ; (ຊ) ຊຸກຍູ້ການທ່ອງທ່ຽວແບບ ອະນຸລັກ ປະຊາຊົນມີສ່ວນຮ່ວມໃນການປົກປັກຮັກສາທຳມະຊາດ, ນຳໃຊ້ພະລັງງານແບບປະຍັດ, ເປັນມິດກັບ ສິ່ງແວດລ້ອມ ແລະ ຫຼຸດຜ່ອນສິ່ງເສດເຫຼືອ ແລະ ອື່ນໆ; (ຍ) ດຳເນີນການຕິດຕາມກວດກາຄຸນນະພາບ ສິ່ງແວດລ້ອມ ໂດຍສະເພາະຄຸນນະພາບອາກາດ (PM 2.5) ແລະ ຊຸກຍູ້ດຳເນີນມາດຕະການຫຼຸດຜ່ອນ ແລະ ສະກັດກັ້ນໄຟປ່າໃນເຂດທີ່ມີຄວາມສ່ຽງ ໃນຂອບເຂດທົ່ວປະເທດ ແລະ (ດ) ກິດຈະກຳອື່ນໆທີ່ໄດ້ຮັບການ ພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

1.4. ຮ່ວງທຶນຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ

ການສະໜອງທຶນຜ່ານຮ່ວງທຶນຊັບພະຍາກອນນ້ຳ ໄດ້ 4 ໂຄງການ ລວມມູນຄ່າ 4 ຮ້ອຍກວ່າລ້ານກີບ ໂດຍສຸມໃສ່ວຽກງານຄື: (ກ) ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ, ມີປະສິດທິຜົນ ແລະ ຮັດກຸມ; (ຂ) ຄຸ້ມຄອງ ແລະ ຮັກສາແຫຼ່ງນ້ຳດ້ວຍການຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳແບບມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ທ້ອງຖິ່ນ ລວມທັງປະຊາຊົນ; (ຄ) ປົກປັກຮັກສາ ແລະ ປັບປຸງຄຸນນະພາບຂອງປ່າຍອດນ້ຳ/ແຫຼ່ງນ້ຳ ທີ່ຕິດພັນກັບອ່າງຮັບນ້ຳ ໂດຍຈັດຕັ້ງຜັນຂະຫຍາຍຍຸດທະສາດນ້ຳ ແລະ ຊັບ ພະຍາກອນນ້ຳແຫ່ງຊາດ ແລະ ແຜນການຄຸ້ມຄອງອ່າງຮັບນ້ຳ; (ງ) ປົກປັກຮັກສາ, ປັບປຸງ ແລະ ຂະ ຫຍາຍອ່າງເກັບນ້ຳທຳມະຊາດ (ຫ້ວຍ, ໜອງ, ຄອງ, ບຶງ) ໃຫ້ມີປະສິດທິພາບສູງຂຶ້ນ ແລະ ມີຄວາມຍືນຍົງ; (ຈ) ປົກປັກຮັກສາຄຸນນະພາບນ້ຳ ແລະ ສ້າງແຜນຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳ ແລະ ຊັບ ພະຍາກອນນ້ຳຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ; (ສ) ຕິດຕາມກວດກາ ຄຸນນະພາບນ້ຳໜ້າດິນ ແລະ ນ້ຳໃຕ້ດິນ ພ້ອມທັງລາຍງານສະພາບຄຸນນະພາບນ້ຳ ແລະ (ຊ) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສກປສ.

1.5. ຮ່ວງທຶນການຄຸ້ມຄອງທີ່ດິນແບບຍືນຍົງ

ການສະໜອງທຶນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນ ໄດ້ 3 ໂຄງການ ລວມມູນຄ່າ 7 ຮ້ອຍກວ່າລ້ານກີບ ໂດຍສຸມໃສ່ວຽກງານຄື: (ກ) ສ້າງນິຕິກຳ ແລະ ຄູ່ມືວິຊາການ ເພື່ອຈັດຕັ້ງປະຕິບັດກົດໝາຍທີ່ດິນ ແລະ ແຜນຈັດສັນແມ່ບົດທີ່ດິນ ພ້ອມທັງປະເມີນການຈັດຕັ້ງປະຕິບັດກົດໝາຍທີ່ດິນ; (ຂ) ສົ່ງເສີມລະບົບການຄຸ້ມຄອງບໍລິຫານທີ່ດິນແບບທັນສະໄໝ; (ຄ) ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ; (ງ) ສຳຫຼວດ ແລະ ເກັບຂໍ້ມູນ ການນຳໃຊ້ທີ່ດິນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ພ້ອມທັງກຳນົດມາດຕະການໃນການແກ້ໄຂ; (ຈ) ການປະເມີນລາຄາທີ່ດິນ, ການຂຶ້ນສຳມະໂນຄົວ ຕອນດິນ ແລະ ການອອກໃບຕາດິນ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ; (ສ) ການຕິດຕາມກວດກາ ແລະ ວັດແທກຄືນ ກ່ຽວກັບຂອບເຂດການເຊົ່າສຳປະທານດິນໃຫ້ມີປະສິດທິຜົນ ພ້ອມທັງບັນທຶກຂໍ້ມູນເຂົ້າໃນລະບົບແຜນທີ່ ແລະ (ຊ) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສກປສ.

1.6. ຮ່ວງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ

ການສະໜອງທຶນຜ່ານຮ່ວງທຶນການປ່ຽນແປງດິນຟ້າອາກາດ ໄດ້ 2 ໂຄງການ ລວມມູນຄ່າ 6 ຮ້ອຍກວ່າ ລ້ານກີບ ໂດຍໄດ້ສຸມໃສ່ວຽກງານຄື: (ກ) ຈັດຕັ້ງປະຕິບັດຄາດໝາຍການຫຼຸດຜ່ອນອາຍເຮືອນແກ້ວ (NDC) ແລະ ກົນໄກການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເປັນຕົ້ນໂຄງການ REDD+ ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວສາກົນ ສົ່ງເສີມທຸ ລະກິດທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ ເຂົ້າໃນການບັນເທົາການປ່ຽນແປງສະພາບດິນຟ້າອາກາດ; ການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ທີ່ສ້າງສິ່ງເສດເຫຼືອໜ້ອຍ, ປະຢັດພະລັງງານ ແລະ ນຳໃຊ້ພະລັງງານທີ່ສະອາດ-ເປັນມິດກັບສິ່ງແວດລ້ອມ; (ຂ) ເຊື່ອມສານການປັບຕົວກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິ ບັດທຳມະຊາດ ເຂົ້າໃນແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຢ່າງເປັນລະບົບ; ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ (ລະບົບເຕືອນໄພ, ປ້ອງກັນ, ການຊ່ວຍເຫຼືອສຸກເສີນ); (ຄ) ຈັດຕັ້ງປະຕິບັດແຜນງານຄົ້ນຄວ້າ ແລະ ເກັບກຳຂໍ້ມູນຄວາມສ່ຽງໄພພິບັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະເມີນຄວາມສ່ຽງ, ສ້າງແຜນທີ່ຄວາມສ່ຽງໄພພິບັດ, ສ້າງແຜນດຳເນີນງານແກ້ໄຂບັນຫາ

ຄວາມສ່ຽງ ແລະ ຄວາມບອບບາງ ເພື່ອໃຊ້ເຂົ້າໃນການວາງແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ; (ງ) ສ້າງ ແລະ ຈັດຕັ້ງປະຕິບັດກິດຈະກຳປຸກຈິດສຳນຶກ ກ່ຽວກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ການປັບຕົວກັບການປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງ ແລະ ສະກັດກັ້ນໄພພິບັດທຳມະຊາດ ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນທ້ອງຖິ່ນຢ່າງມີປະສິດທິພາບ; (ຈ) ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດທີ່ມີປະສິດທິພາບ ແລະ ປະສິດທິຜົນ, ສ້າງຄວາມອາດສາມາດໃນການພະຍາກອນນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ແຜ່ນດິນໄຫວ, ສືບຕໍ່ປັບປຸງລະບົບຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດ ໃນຂອບເຂດທົ່ວປະເທດ, ປັບປຸງ ແລະ ຂະຫຍາຍລະບົບເຕືອນໄພລ່ວງໜ້າໃຫ້ຫຼາຍຂຶ້ນ.

2) ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການເງິນກູ້

- ໃນປີ 2022 ໄດ້ສຳເລັດການປິດໂຄງການເງິນກູ້ ຈຳນວນ 5 ໂຄງການ ຄື: 1) ໂຄງການບໍລິສັດປັບປຸງ ແລະ ຄຸ້ມຄອງຂີ້ເຫຍື້ອ ຫຼັກ 52 ເມືອງໂພນໂຮງ, ແຂວງວຽງຈັນ; 2) ໂຄງການຄຸ້ມຄອງຂີ້ເຫຍື້ອ ເມືອງ ເຟືອງ, ແຂວງວຽງຈັນ; 3) ໂຄງການກອງທຶນບ້ານນ້ຳເດືອ ເມືອງ ປາກກະດິງ, ແຂວງບໍລິຄຳໄຊ; 4) ໂຄງການຄຸ້ມຄອງຂີ້ເຫຍື້ອ ເມືອງ ປາກກະດິງ, ແຂວງບໍລິຄຳໄຊ; 5)ໂຄງການຄຸ້ມຄອງຂີ້ເຫຍື້ອ ເມືອງໜອງບົກ, ແຂວງຄຳມ່ວນ;
- ໄດ້ລົງປຶກສາຫາລືກັບ ອຳນາດການປົກຄອງບ້ານ ທ່ານາແລ້ງ ແລະ ບ້ານດົງໂພນເລົ່າ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ເພື່ອຂໍຈັດກອງປະຊຸມປຶກສາຫາລື ກ່ຽວກັບການອາຍັດຫຼັກຊັບຄ້ຳປະກັນເງິນກູ້ ຂອງທ່ານ ວິລັດ ລາວັນພອນ ທີ່ໄດ້ກູ້ຢືມເງິນຈາກ ກປສ ໃນການສ້າງຟາມລ້ຽງໝູ ແຕ່ປີ 2013;
- ສືບຕໍ່ຕິດຕາມທວງຕົ້ນທຶນ ແລະ ດອກເບ້ຍ ໂຄງການເງິນກູ້ທີ່ຍັງຄ້າງຊຳລະເປັນຕົ້ນ 7 ໂຄງການດັ່ງນີ້:
  1) LO 03 ໂຄງການ ຊື້ລົດຂົນຂີ້ເຫຍື້ອ ມ.ຄົງເຊໂດນ;
  2) LO 06 ໂຄງການ ຊື້ລົດຂົນຂີ້ເຫຍື້ອ ມ.ທ່າແຕງ;
  3) LO 09 ໂຄງການ ຊື້ລົດຂົນຂີ້ເຫຍື້ອ ມ.ເລົ່າງາມ;
  4) LO 12 ໂຄງການ ກອງທຶນບ້ານໜອງເມກ ມ.ຄຳເກີດ;
  5) LO 16 ໂຄງການ ກອງທຶນບ້ານຫີນໂງ່ນ ມ.ວຽງທອງ;
  6) LO 19 ໂຄງການ ຊື້ລົດຂົນຂີ້ເຫຍື້ອ ມ. ວຽງທອງ;
  7) LO 21 ໂຄງການ ຊື້ລົດຂົນຂີ້ເຫຍື້ອ ມ.ນ້ຳບາກ.

III. ການຕິດຕາມ ແລະ ປະເມີນຜົນໂຄງການຍ່ອຍ

ໃນປີ 2022 ໄດ້ມີການລົງຊຸກຍູ້ ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດໂຄງການ ເຊັ່ນ:

- ສຳເລັດການລົງຊຸກຍູ້ ແລະ ຕິດຕາມ 3 ໂຄງການຍ່ອຍ ຄື: ໂຄງການ CBI-009 CHP, PC-098 CHP ແລະ PC-099 CHP ຢູ່ນະຄອນປາກເຊ ແຂວງຈຳປາສັກ ລະຫວ່າງວັນທີ 25-29 ກໍລະກົດ 2022;
- ໄດ້ຊຸກຍູ້, ແນະນຳ ແລະ ກວດບົດລາຍງານປິດໂຄງການ ຈຳນວນ 6 ໂຄງການ ຄື: ແຂວງສາລະວັນ 2 ໂຄງການ, ແຂວງ ຄຳມ່ວນ 1 ໂຄງການ, ແຂວງໄຊຍະບູລີ 1 ໂຄງການ, ແຂວງ ອຸດົມໄຊ 1 ໂຄງການ ແລະ ກົມທີ່ດິນ 1 ໂຄງການ. ພ້ອມທັງ ເຂົ້າຮ່ວມກອງປະຊຸມສະຫຼຸບປິດໂຄງການເປັນທາງການ ທັງຮູບແບບອອນລາຍ ແລະ ເຊິ່ງໜ້າ.

3.1. ຕີລາຄາການຈັດຕັ້ງປະຕິບັດ

- ຕີລາຄາການຈັດຕັ້ງປະຕິບັດຂອງທຶນພາຍໃນ ປະຕິບັດໄດ້ 98% ທຽບໃສ່ແຜນດັດແກ້ 6 ເດືອນທ້າຍປີ 2022;
- ການຈັດຕັ້ງປະຕິບັດໂຄງການຕາມແຕ່ລະຮ່ອງທຶນຍັງບໍ່ທັນເປັນໄປຕາມແຜນທີ່ຂຶ້ນໄວ້ຍ້ອນການຂໍຄ່ຽນເງິນຫລ້າຊ້າ;
- ເຫັນວ່າການຈັດຕັ້ງປະຕິບັດໂຄງການໃນຜ່ານມາແມ່ນບໍ່ສາມາດຈັດຕັ້ງປະຕິບັດຕາມແຜນງົບປະມານທີ່ວາງໄວ້.

3.2. ຂໍ້ສະດວກ ຂໍ້ຫຍຸ້ງຍາກ ແລະ ບົດຮຽນ ທີ່ຖອດຖອນໄດ້

ຂໍ້ສະດວກ:

- ຍ້ອນມີການຊີ້ນຳ ຈາກຄະນະນຳຫ້ອງການ ກປສ ຈຶ່ງເຮັດໃຫ້ຫຼາຍກິດຈະກຳຂອງທຶນພາຍໃນ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ແກ້ໄຂບັນຫາໄດ້ທັນຕາມກຳນົດເວລາ;
- ຍ້ອນມີນະໂຍບາຍການສະໜອງທຶນ ຈຶ່ງເຮັດໃຫ້ການພິຈາລະນາຮັບໂຄງການຕ່າງໆ ເປັນໄປຕາມຂັ້ນຕອນ ແລະ ມີຫຼັກການຄັກແນ່ ເຮັດໃຫ້ຜູ້ສະເໜີຂໍທຶນຮັບຮູ້ໄດ້ເຖິງຈຸດປະສົງ ແລະ ຂົງເຂດທີ່ຈະສະເໜີຂໍທຶນໄດ້.

ຂໍ້ຫຍຸ້ງຍາກ:

- ການປັບປຸງກົງຈັກການຈັດຕັ້ງພາຍໃນຂະແໜງການ ຊຶ່ງມີການຊັບປ່ຽນຕຳແໜ່ງງານ ກໍ່ເປັນບັນຫາໜຶ່ງທີ່ເຮັດໃຫ້ການຈັດຕັ້ງປະຕິບັດໂຄງການພົບຄວາມຫຍຸ້ງຍາກໃນໄລຍະຜ່ານມາ;
- ບັນຫາທີ່ພົບຂອງຂອງການຈັດຕັ້ງປະຕິບັດໂຄງການແມ່ນບໍ່ສາມາດສະໜອງງົບປະມານໄປຕາມແຜນໄຕມາດ ຈຶ່ງ ເຮັດໃຫ້ການຈັດຕັ້ງປະຕິບັດກິດຈະກຳຊັກຊ້າ ແລະ ບໍ່ໄປຕາມແຜນທີ່ວາງໄວ້;
- ບາງໂຄງການຂັ້ນສູນກາງ ແລະ ທ້ອງຖິ່ນ ຈຳນວນໜຶ່ງ ແມ່ນບໍ່ສົ່ງບົດສະຫຼຸບລາຍງານປະຈຳປີ ຕາມການແຈ້ງການ ຂອງ ກປສ.

ບົດຮຽນທີ່ຖອດຖອນໄດ້

- ການຂຶ້ນແຜນງົບປະມານຕ້ອງໄດ້ຊຸກຍູ້ໃຫ້ໂຄງການ ກະກຽມແຜນລ່ວງໜ້າ ໃຫ້ສົ່ງກ່ອນ 6 ເດືອນ;
- ຕ້ອງໄດ້ມີການປະສານສົມທົບກັບກະຊວງການເງິນ ກ່ຽວກັບຂະບວນການຂໍຄ່ຽນເງິນ ເພື່ອໃຫ້ການອະນຸມັດງົບ ປະມານທັນຕາມແຕ່ລະໄຕມາດ.

IV. ແຜນການຈັດຕັ້ງປະຕິບັດ ປະຈຳປີ 2023

1) ການສະໜອງທຶນໃຫ້ແຕ່ລະຮ່ອງທຶນ

1. ການສະໜອງທຶນຜ່ານຮ່ອງທຶນນະໂຍບາຍ ສະເພາະທຶນພາຍໃນ ຈຳນວນ 3 ຕື້ ຈະສຸມໃສ່ວຽກງານຄື: (1) ສະໜັບສະໜູນໂຄງການຂະ ໜາດນ້ອຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ (ພຊສ/ຫຊສ) ໃນການປະຕິບັດພາລະບົດບາດການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ; (2) ສະໜັບສະໜູນການຈັດຕັ້ງປະຕິບັດຂອງຄະນະກຳມະການຕ່າງໆເຊັ່ນ: ສະພາບໍລິຫານ ແລະ ຄະນະວິຊາການ ກປສ; (3) ສະໜັບສະໜູນການພັດທະນາ, ປັບປຸງເຜີຍແຜ່ຂໍ້ມູນຂ່າວສານ, ແລະ ຕິດຕາມກິດຈະກຳທີ່ກ່ຽວຂ້ອງກັບນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; (4) ສະໜັບສະໜູນການສ້າງຖານຂໍ້ມູນ ແລະ ລະບົບການລົງທະບຽນ, ລະຫັດຂອງຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງ

ແວດລ້ອມ, ການຄົ້ນຄວ້າ, ເຄືອຄ່າຍເຜີຍແຜ່, ມາດຕະການແກ້ໄຂບັນຫາສຸກເສີນກ່ຽວກັບຊັບພະຍາ ກອນທຳມະ ຊາດ ແລະ ສິ່ງແວດ ລ້ອມ; (5) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

2. ການສະໜອງທຶນຜ່ານຮ່ອງທຶນຊີວະນາໆພັນ ຈຳນວນ 1,5 ຕື້ ຈະສຸມໃສ່ວຽກງານຄື: (1) ສ້າງ ແລະ ຈັດຕັ້ງ ປະຕິບັດແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້ຂອງຂະແໜງການທີ່ກ່ຽວຂ້ອງຂັ້ນ ສູງກາງ ແລະ ທ້ອງຖິ່ນ; (2) ສຳຫຼວດ, ຈັດແບ່ງ, ໝາຍເຂດປ່າ ແລະ ປະເພດປ່າ ພ້ອມທັງມີການຕິດຕາມກວດກາ ການຄຸ້ມຄອງ ແລະ ນຳໃຊ້ປ່າແຕ່ລະປະເພດ; (3) ສົ່ງເສີມການເກັບກຳຂໍ້ມູນ, ການຂຶ້ນບັນຊີ ແລະ ການຄາດຄະເນ ມູນຄ່າຊັບພະຍາກອນທຳມະຊາດ; (4) ສົ່ງ ເສີມການອະນຸລັກພັນພືດ, ພັນສັດທີ່ຫາຍາກ ແລະ ໃກ້ຈະສູນພັນ ລວມ ທັງການປົກປັກຮັກສາທີ່ຢູ່ອາໃສຂອງພືດ ແລະ ສັດດັ່ງກ່າວ; (5) ສົ່ງເສີມການຄຸ້ມຄອງ, ປົກປັກຮັກສາ ແລະ ນຳ ໃຊ້ປ່າແບບຍືນຍົງຂອງຊຸມຊົນ ເພື່ອ ປົກປັກຮັກສາປ່າຍອດນ້ຳ ແລະ ເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນໃຫ້ໄດ້ 70% ຂອງເນື້ອທີ່ດິນທົ່ວປະເທດ ແລະ ຊຸກຍູ້ການຂະຫຍາຍຕົວເສດຖະກິດ; (6) ສົ່ງເສີມການປູກປ່າ ແລະ ຟື້ນຟູ ປ່າໃສ່ດິນປອກໂຫລ້ນ ແລະ ດິນເຊື່ອມໂຊມ ເພື່ອຂະຫຍາຍເນື້ອທີ່ປົກຫຸ້ມຂອງປ່າ ແລະ ຍົກລະ ດັບຊີວິດການເປັນ ຢູ່ຂອງປະຊາຊົນໃຫ້ດີຂຶ້ນ; (7) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກສະພາບໍລິ ຫານ ກປສ.

3. ການສະໜອງທຶນຜ່ານຮ່ອງທຶນສິ່ງແວດລ້ອມ ຈຳນວນ 2 ຕື້ ຈະສຸມໃສ່ວຽກງານຄື: (1) ຈັດຕັ້ງປະຕິບັດກົນໄກ ໃນການສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີປະສິດທິຜົນ, ການນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງ ແວດ ລ້ອມ ແລະ ການຜະລິດທີ່ສະອາດ; (2) ສືບຕໍ່ຍົກສູງຂະບວນການສຶກສາ ແລະ ສ້າງຈິດສຳນຶກກ່ຽວກັບການ ປົກປັກຮັກສາສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາ ກອນທຳມະຊາດແບບຍືນຍົງ; (3) ຈັດຕັ້ງປະຕິບັດນິຕິກຳ, ມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ, ຄູ່ມືແນະນຳ ແລະ ກົນໄກສຳລັບການປ້ອງກັນ, ຄວບຄຸມ ແລະ ຕິດຕາມກວດກາມົນລະພິດ (ດິນນ້ຳ, ອາກາດ ແລະ ສຽງ) ໃຫ້ມີປະສິດທິພາບ ແລະ ປະສິດທິຜົນໃນຂອບເຂດທົ່ວ ປະເທດ; (4) ຄຸ້ມຄອງຕິດຕາມກວດກາດ້ານສິ່ງແວດລ້ອມເຊັ່ນ: ສິ່ງເສດເຫຼືອ, ສານເຄມີທີ່ເປັນພິດອັນຕະລາຍ, ມົນລະພິດທາງອາກາດ, ມົນລະພິດທາງສຽງ ແລະ ການປ່ອຍນ້ຳເສຍຈາກຊຸມຊົນ ແລະ ໂຮງງານອຸດສາຫະກຳ ຕ່າງໆ; (5) ຜັນຂະຫຍາຍການຈັດຕັ້ງປະຕິບັດແນວຄວາມຄິດ 3Rs (ຫຼຸດຜ່ອນ, ນຳໃຊ້ຄືນ, ໝຸນໃຊ້ຄືນ) ໃນຄົວ ເຮືອນ ພ້ອມທັງປັບປຸງລະບົບການຄຸ້ມຄອງ ແລະ ກຳຈັດສິ່ງເສດເຫຼືອໃນເຂດຕົວເມືອງໃຫຍ່ ແລະ ເຂດຊົນນະບົດ; (6) ສົ່ງເສີມອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງຕາມທິດສີ ຂຽວ ແລະ ຍືນຍົງ ໂດຍສະເພາະກະສິກຳ ສະອາດ ແລະ ກະສິກຳປອດສານພິດ; (7) ຊຸກຍູ້ການທ່ອງ ທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມໃນການປົກ ປັກຮັກສາທຳມະຊາດ, ນຳໃຊ້ພະລັງງານແບບປະຢັດ, ເປັນມິດກັບສິ່ງແວດລ້ອມ ແລະ ຫຼຸດຜ່ອນສິ່ງເສດເຫຼືອ ແລະ ອື່ນໆ; (8) ດຳເນີນການຕິດຕາມກວດກາຄຸນນະພາບສິ່ງແວດລ້ອມ ໂດຍສະເພາະຄຸນນະພາບອາກາດ (PM 2,5) ແລະ ຊຸກຍູ້ດຳເນີນມາດຕະການຫຼຸດຜ່ອນ ແລະ ສະກັດກັ້ນໄຟປ່າໃນເຂດທີ່ມີຄວາມສ່ຽງ ໃນຂອບເຂດທົ່ວປະເທດ; (9) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

4. ການສະໜອງທຶນໃນຮ່ອງທຶນຊັບພະຍາກອນນ້ຳ ຈຳນວນ 1,1 ຕື້ ຈະສຸມໃສ່ວຽກງານຄື: (1) ສ້າງ ປັບປຸງ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ, ມີປະສິດທິຜົນ ແລະ ຮັດກຸມ; (2) ຄຸ້ມ ຄອງ ແລະ ຮັກສາແຫຼ່ງນ້ຳດ້ວຍການຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນຳ

ໃຊ້ນ້ຳແບບມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ທ້ອງຖິ່ນ ລວມທັງປະຊາຊົນ; (3) ປົກປັກຮັກສາ ແລະ ປັບປຸງຄຸນນະພາບຂອງປ່າຍອດນ້ຳ/ແຫຼ່ງນ້ຳ ທີ່ຕິດພັນກັບອ່າງຮັບນ້ຳ ໂດຍຈັດຕັ້ງຜັນຂະຫຍາຍຍຸດທະສາດນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ແລະ ແຜນການຄຸ້ມຄອງອ່າງຮັບນ້ຳ; (4) ປົກປັກຮັກສາ, ປັບປຸງ ແລະ ຂະຫຍາຍອ່າງເກັບນ້ຳທຳມະຊາດ (ຫ້ວຍ, ໜອງຄອງ, ບຶງ) ໃຫ້ມີປະສິດທິພາບສູງຂຶ້ນ ແລະ ມີຄວາມຍືນຍົງ; (5) ປົກປັກຮັກສາຄຸນນະພາບນ້ຳ ແລະ ສ້າງແຜນຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ; (6) ຕິດຕາມກວດກາຄຸນນະພາບນ້ຳໜ້າດິນ ແລະ ນ້ຳໃຕ້ດິນ ພ້ອມທັງລາຍງານສະພາບຄຸນນະພາບນ້ຳ; (7) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

5. ການສະໜອງທຶນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນ ຈຳນວນ 1,4 ຕື້ ສຸມໃສ່ວຽກງານຄື:

- ສ້າງນິຕິກຳ ແລະ ຄູ່ມືວິຊາການ ເພື່ອຈັດຕັ້ງປະຕິບັດກົດໝາຍທີ່ດິນ ແລະ ແຜນຈັດສັນແມ່ບົດທີ່ດິນ ພ້ອມທັງປະເມີນການຈັດຕັ້ງປະຕິບັດກົດໝາຍທີ່ດິນ;
- ສົ່ງເສີມລະບົບການຄຸ້ມຄອງບໍລິຫານທີ່ດິນແບບທັນສະໄໝ;
- ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມແບບຮອບດ້ານ;
- ສຳຫຼວດ ແລະ ເກັບຂໍ້ມູນ ການນຳໃຊ້ທີ່ດິນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ພ້ອມທັງກຳນົດມາດຕະການໃນການແກ້ໄຂ;
- ການປະເມີນລາຄາທີ່ດິນ, ການຂຶ້ນສຳມະໂນຄົວຕອນດິນ ແລະ ການອອກໃບຕາດິນ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ;
- ການຕິດຕາມກວດກາ ແລະ ວັດແທກຄືນ ກ່ຽວກັບຂອບເຂດ ການເຊົ່າສຳປະທານດິນໃຫ້ມີປະສິດທິຜົນ ພ້ອມທັງບັນທຶກຂໍ້ມູນເຂົ້າໃນລະບົບແຜນທີ່;
- ແລະ ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

6. ການສະໜອງທຶນຜ່ານຮ່ວງທຶນການປ່ຽນແປງດິນຟ້າອາກາດ ຈຳນວນ 1,2 ຕື້ ຈະສຸມໃສ່ວຽກງານຄື:

- ຈັດຕັ້ງປະຕິບັດຄາດໝາຍການຫຼຸດຜ່ອນອາຍເຮືອນແກ້ວ (NDC) ແລະ ກົນໄກການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວເປັນຕົ້ນໂຄງການ REDD+ ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວສາກົນ ສົ່ງເສີມທຸລະກິດທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ ເຂົ້າໃນການບັນເທົາການປ່ຽນແປງສະພາບດິນຟ້າອາກາດ; ການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ທີ່ສ້າງສິ່ງເສດເຫຼືອໜ້ອຍ, ປະຢັດພະລັງງານ ແລະ ນຳໃຊ້ພະລັງງານທີ່ສະອາດ-ເປັນມິດກັບສິ່ງແວດລ້ອມ;
- ເຊື່ອມສານການປັບຕົວກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ເຂົ້າໃນແຜນພັດທະນາຂອງຂະແໜງ ການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຢ່າງເປັນລະບົບ; ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະ ການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ (ລະບົບເຕືອນໄພ, ປ້ອງກັນ, ການຊ່ວຍເຫຼືອສຸກເສີນ);

- ຈັດຕັ້ງປະຕິບັດແຜນງານຄົ້ນຄວ້າ ແລະ ເກັບກຳຂໍ້ມູນຄວາມສ່ຽງໄພພິບັດຢູ່ຂັ້ນສູນກາງ ແລະ ທ້ອງ ຖິ່ນເພື່ອປະເມີນ ຄວາມສ່ຽງ, ສ້າງແຜນທີ່ຄວາມສ່ຽງໄພພິບັດ, ສ້າງແຜນດຳເນີນງານແກ້ໄຂບັນຫາຄວາມສ່ຽງ ແລະ ຄວາມບອບບາງ ເພື່ອໃຊ້ເຂົ້າໃນການວາງແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
- ສ້າງ ແລະ ຈັດຕັ້ງປະຕິບັດກິດຈະກຳປຸກຈິດສຳນຶກ ກ່ຽວກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ການປັບ ຕົວກັບປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງ ແລະ ສະກັດກັ້ນໄພພິບັດທຳມະຊາດເພື່ອຮັບປະກັນການນຳໃຊ້ ຊັບພະຍາກອນທ້ອງຖິ່ນຢ່າງມີປະສິດທິພາບ;
- ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບການປ່ຽນແປງດິນຟ້າ ອາກາດ ແລະ ໄພພິບັດທຳມະຊາດທີ່ມີປະສິດທິພາບ ແລະ ປະສິດທິຜົນ, ສ້າງຄວາມອາດສາມາດໃນການ ພະຍາກອນນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ແຜ່ນດິນໄຫວ, ສືບຕໍ່ປັບປຸງລະບົບຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກ ກະສາດ ໃນຂອບເຂດທົ່ວປະເທດ, ປັບປຸງ ແລະ ຂະ ຫຍາຍລະບົບເຕືອນໄພລ່ວງໜ້າໃຫ້ຫຼາຍຂຶ້ນ.

ຕາຕະລາງ 3 : ຄາດຄະເນການຈັດສັນງົບປະມານ ສຳລັບຂ້ອງທຶນພາຍໃນ ປະຈຳປີ 2023

(ອັດຕາແລກປ່ຽນ 17,270)

ລ/ດ	ຮ່ອງທຶນ	ຄາດຄະເນການຈັດສັນງົບປະມານໂຄງການ ທີ່ຈັດຕັ້ງປະຕິບັດປີ 2023	
		ສົມທຽບເປັນເງິນກີບ	ສົມທຽບເປັນເງິນໂດ ລາ
I	**ທຶນພາຍໃນ (ໂຄງການຍ່ອຍ)**	**10.299.000.000**	**596.352**
1	ຮ່ອງທຶນດ້ານນະໂຍບາຍ	3.000.000.000	173.172
2	ຮ່ອງທຶນດ້ານຊີວະນາໆພັນ	1.500.000.000	86.856
3	ຮ່ອງທຶນດ້ານຄວບຄຸມມົນລະພິດ	2.000.000.000	115.808
4	ຮ່ອງທຶນການຄຸ້ມຄອງຊັບພະຍາກອນນ້ຳ	1.100.000.000	63.694
5	ຮ່ອງທຶນການຄຸ້ມຄອງການນຳໃຊ້ທີ່ດິນ	1.499.000.000	86.798
6	ຮ່ອງທຶນການປ່ຽນແປງດິນຟ້າອາກາດ	1.200.000.000	69.485
II	**ຄ່າບໍລິຫານ**	**2.460.000.000**	**142.444**
	ລວມທັງໝົດທຶນພາຍໃນ (I+II)	**12.759.000.000**	**738.796**

2) ການສະໜອງທຶນໃຫ້ໂຄງການໃໝ່

ການຈັດສັນທຶນ ສຳລັບແຕ່ລະຮ່ອງທຶນ ແມ່ນອີງໃສ່ກອບການສະໜອງທຶນຂອງແຕ່ລະຮ່ອງທຶນ ທີ່ກຳນົດໄວ້ໃນຄຳ ແນະນຳສະບັບນີ້ ສອດຄ່ອງກັບ ກົດໝາຍ, ວິໄສທັດ, ຍຸດທະສາດ, ແຜນການ 5 ປີ ຂອງ ກປສ ແລະ ສອດຄ່ອງກັບສະພາບ ບັນຫາສິ່ງແວດລ້ອມຕົວຈິງທີ່ຕ້ອງການແກ້ໄຂ, ແນວທາງນະໂຍບາຍ ແລະ ມາດຕະການໃນການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນຊຸມປີຕໍ່ໜ້າ.

ຕາຕະລາງ 4: ຄາດຄະເນການສະໜອງທຶນ ພາຍໃນ 2022-2025 ຕາມແຜນງົບປະມານແຫ່ງລັດ

ລາຍການ	ເປີເຊັນ	ປີ 2022 ຈຳນວນເງິນ (ກີບ)	ປີ 2023 ຈຳນວນເງິນ (ກີບ)	ປີ 2024 ຈຳນວນເງິນ (ກີບ)	ປີ 2025 ຈຳນວນເງິນ (ກີບ)
ຮ່ວງທຶນ ດ້ານນະໂຍບາຍ	30%	3,361,200,000	3,361,200,000	3,361,200,000	3,361,200,000
ຮ່ວງທຶນ ດ້ານຊີວະນາໆພັນ	15%	1,680,600,000	1,680,600,000	1,680,600,000	1,680,600,000
ຮ່ວງທຶນ ດ້ານສິ່ງແວດລ້ອມ	20%	2,240,800,000	2,240,800,000	2,240,800,000	2,240,800,000
ຮ່ວງທຶນ ດ້ານດິນ	15%	1,680,600,000	1,680,600,000	1,680,600,000	1,680,600,000
ຮ່ວງທຶນ ດ້ານນ້ຳ	10%	1,120,400,000	1,120,400,000	1,120,400,000	1,120,400,000
ຮ່ວງທຶນປ່ຽນແປງດິນຟ້າອາກາດ	10%	1,120,400,000	1,120,400,000	1,120,400,000	1,120,400,000
ລວມທັງໝົດ	**100%**	11,204,000,000	11,204,000,000	11,204,000,000	11,204,000,000